# ເວົ້າອອກມາບໍ່ຕອ້ງຢ້ານ(ເປີດເຜີຍຄວາມຜິດຂອງຜູ້ມີອຳນາດ)

ພວກເຮົາຫວັງເປັນຢ່າງຍິ່ງພະນັກງານແລະບັນດາຄູ່ຮ່ວມມືຂອງພວກເຮົາປະຕິບັດດ້ວຍຄວາມຊື່ສັດສຸດຈະລິດ ໂດຍອີງຕາມມາດຕະຖານຂອງຄວາມປະພຶດທີ່ໄດ້ອະທິບາຍໃນຫຼັກຈັນຍາບັນຂອງພວກເຮົາ. ຖ້າທ່ານສົງໄສວ່າ ເກີດມີການລະເມີດກົດໝາຍ ຫລື ຫລັກຈັນຍາບັນຂອງພວກເຮົາ , ພວກເຮົາ ຕອ້ງການໃຫ້ທ່ານເວົ້າອອກມາໂດຍບໍ່ຕອ້ງຢ້ານ.

ຫລັກຈັນຍາບັນ ຂອງພວກເຮົາມີໃຫ້ທ່ານໃນອິນທຣາເນັດ ທີ່: www.imperialbrandsplc.com. ທ່ານສາມາດສອບຖາມກ່ຽວກັບຫລັກຈັນຍາບັນໂດຍ ການສົ່ງ ອີເມລ ເຖິງ: Governance.Team@uk.imptob.com

## ມັນໄດ້ມີຫລາຍຊອ່ງທາງເຊິ່ງສາມາດຍົກເລື່ອງຂຶ້ນມາເຊັ່ນ:

### 1. ເວົ້າອອກມາໂດຍບໍ່ຢ້ານໃນເຂດທອ້ງຖິ່ນ

ຖ້າທ່ານຮູ້ສຶກວ່າບໍ່ສະບາຍໃຈໃນການປາກເວົ້າ, ທ່ານສາມາດຍົກເລື່ອງ( Raise concern) ຂອງທ່ານຂຶ້ນມາໃຫ້ຜູ້ຈັດການສາຍງານຂອງທ່ານ ຫລື ທີມງານຊັບພະຍາກອນມະນຸດໃນທອ້ງຖິ່ນຂອງທ່ານ. ພວກເຮົາມີຂະບວນການຕ່າງໆເພື່ອຮັບປະກັນວ່າຄວາມກັງວົນຂອງທ່ານໄດ້ຮັບການແກ້ໄຂຢ່າງຕໍ່ເນື່ອງໃນທ້ອງທຸລະກິດ.

### 2. ເວົ້າອອກມາ ໃຫ້ ບັນດາ ຜູ້ບໍລິຫານຂັ້ນສູງຂອງພວກເຮົາໂດຍບໍ່ຕອ້ງຢ້ານ

ຖ້າທ່ານຮູ້ສຶກບໍ່ສະບາຍໃຈໃນການຍົກເລື່ອງຂອງທ່ານຂຶ້ນມາໃນທອ້ງຖິ່ນ ຫລື ທ່ານໄດ້ ຍົກເລື່ອງຂອງທ່ານຂຶ້ນມາແລ້ວໃນທອ້ງຖິ່ນແລະເຊື່ອວ່າການຕອບສະໜອງຂອງທອ້ງຖິ່ນນັ້ນຍັງບໍ່ພຽງພໍ, ທ່ານກໍ່ສາມາດຕິດຕໍ່ທຸກໆບຸກຄົນໃດໜຶ່ງລຸ່ມນີ້:

- ເລຂາຂອງບໍລິສັດ;
- ເຈົ້າໜ້າທີ່ຄວບຄຸມການເງິນຂອງກຸ່ມບໍລິສັດ; ຫລື
- ກຸ່ມຜູ້ຊີ້ນຳດ້ານຊັບພະຍາກອນມະນຸດ.

ໂທລະສັບ: +44 (0)117 963 6636
ແລະເວົ້າວ່ານີ້ຄືເລື່ອງກ່ຽວກັບການເປີດເຜີຍຄວາມຜິດຂອງຜູ້ມີອຳນາດ.

ຖ້າທ່ານມັກທີ່ຈະຍົກເລື່ອງຂອງທ່ານໂດຍການຂຽນເປັນລາຍລັກອັກສອນກໍ່ເປັນການດີ, ແຕ່ມັນຈະຊ່ວຍໄດ້ດີ ຖ້າບອກພວກເຮົາເຮັດແນວໃດຈຶ່ງສາມາດ ຕິດຕໍ່ ທ່ານຄືນໄດ້. ທ່ານສາມາດ ສົ່ງ ຈົດໝາຍຂອງທ່ານເຖິງ:

| | |
|---|---|
| ເລຂາຂອງບໍລິສັດ;<br>121 ຖະໜົນ ວິນເທີຣະໂຕກ ,<br>ບຣິສໂຕລ BS3 2LL,<br>ສະຫະລາຊະອານາຈັກ(UK)<br>ເຮັດເຄື່ອງໝາຍ: '**ສ່ວນຕົວ**' | ແຟັກ: +44 (0)117 966 7859<br>ອີເມລ: whistle.blowing@uk.imptob.com |

3. **ເວົ້າອອກມາບໍ່ຕອ້ງຢ້ານໂດຍການນໍາໃຊ້ ໂທລະສັບສາຍດ່ວນ ຕ່າງປະເທດ ເອັກໂປລິງຄ໌ (Expolink External Hotline)**

ທ່ານຍັງສາມາດເລືອກທີ່ຈະຍົກເລື່ອງຂອງທ່ານຂື້ນມາໃນທຸກໆຂັ້ນໂດຍນໍາໃຊ້ການບໍລິການເອກະລາດທີ່ຄົບ
ຖ້ວນ ເຊິ່ງ ສະໜອງໃຫ້ໂດຍ ເອັກໂປລິງຄ໌ (Expolink) ເຊິ່ງສາມາດຕິດຕໍ່ໄດ້ໂດຍຜ່ານ
ໂທລະສັບ,ອີເມລ ຫຼື ເວບ.
ເອັກໂປລິງຄ໌ຈະຮັບປະກັນວ່າເລື່ອງຂອງທ່ານຈະຖືກສົ່ງຜ່ານເຖິງບຸກຄົນທີ່ເໝາະສົມຢ່າງຮີບດ່ວນ:

- ຮອທ໌ ໄລ ຫລື ສາຍດ່ວນ ເອັກໂປລິງຄ໌ເປີດມື້ໜຶ່ງຕະຫລອດ 24 ຊົ່ວໂມງ,7 ມື້ຕໍ່ອາທິດ( ຍົກເວັ້ນ ວັນທີ 25 ທັນວາ).
  ໝາຍເລກໂທລະສັບທຸກໆປະເທດແມ່ນບໍ່ຄືກັນ. ຖ້າທ່ານບໍ່ຮູ້ຈັກໝາຍເລກທີ່ຖືກຕອ້ງ ທ່ານກໍ່ສາມາດເບິ່ງກະດານແຈ້ງການໃນທອ້ງຖິ່ນ ຫລື ເຂົ້າເວບໄຊ
  www.expolink.co.uk, www.imperialbrandsplc.com ຫລື ກຸ່ມ ອິນທຣາເນັດ
- ການລາຍງານສາມາດສົ່ງອີເມລເຖິງ ເອັກໂປລິຄ໌ ທີ imperialtobacco@expolink.co.uk
- ການລາຍງານຜ່ານ ເວບ ສາມາດຍື່ນສະເໜີຈາກເວບໄຊ
  ເອັກໂປລິງຄ໌www.expolink.co.uk
  ນໍາໃຊ້ລະຫັດຜ່ານ‘imperialtobacco’.

**ການຮັບປະກັນຂອງພວກເຮົາຕໍ່ກັບທ່ານ**

ພວກເຮົາຈະຮັກສາຄວາມລັບໃນເລື່ອງຂອງທ່ານຢ່າງດີເທົ່າທີ່ຈະເປັນໄປໄດ້.
ເຖິງແນວໃດກໍ່ຕາມ, ເພື່ອປະຕິບັດການສືບສວນທີ່ສົມເຫດສົມຜົນ,
ຂໍ້ມູນບາງອັນອາດຈໍາເປັນຕອ້ງຖືກເປີດເຜີຍ.

ທ່ານອາດເລືອກທີ່ຈະຍົກເລື່ອງຂອງທ່ານຂື້ນມາໂດຍບໍ່ລະບຸຊື່ນາມສະກຸນ,ນີ້ແມ່ນໄດ້ອະນຸຍາດໂດຍຂໍ້ກົດໝາຍໃນປະເທດທີ່ທ່ານເຮັດວຽກ.
ພວກເຮົາບໍ່ອົດກັ້ນຕໍ່ກັບການແກ້ແຄ້ນບຸກຄົນທີ່ເປີດເຜີຍການລະເມີດຫຼັກຈັນຍາບັນທີ່ເກີດຂຶ້ນຕົວຈິງ ຫຼື ສົງໃສວ່າເກີດຂຶ້ນ ຫຼື ຊ່ວຍໃນເລື່ອງການສືບສວນ. ແຕ່ວ່າ,ເລື່ອງທີ່ຍົກຂຶ້ນມາໂດຍມີເຈດຕະນາໃສ່ຮ້າຍປ້າຍສີນັ້ນ ອາດຈະຖືກນໍາໄປສູ່ການລົງໂທດທາງລະບຽບວິໄນ.